## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 27 ສິງຫາ 2023 (08-27-2023)

---

### ອາບີກາຍ: ຍິງທີ່ມີສະຕິປັນຍາ

*ເມື່ອໃດທີ່ບາງຄົນໄດ້ຊ່ວຍທ່ານໃຫ້ຫຼີກເວັ້ນຈາກຄວາມຜິດພາດ?*

**ຈຸດສຳຄັນໃນບົດຮຽນ:** ຂັ້ນຕອນໃນການຮັກສາສະຖານະການບໍ່ດີຈາກການໄປສູ່ພັຍພິບັດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ລູກໆຂອງຂ້າພະເຈົ້າເຂົ້າກັນໄດ້ດີຢ່າງໜ້າພູມໃຈ. ເຂົາເຈົ້າແບ່ງປັນ, ປ່ຽນຜຽນ, ແລະຜູ້ອາຍຸສິບປີຂອງຂ້າພະເຈົ້າອ່ານໜັງສືໃຫ້ນ້ອງສາວນ້ອຍຂອງລາວຟັງ. ແຕ່ຍັງມີການກ່າວ-ຄວາມຊຸບຊິບຫຼາຍຢູ່. ເມື່ອຂ້າພະເຈົ້າໄດ້ຍິນສຽງຮ້ອງສອງພະຍາງ, “ມະ-ມາ” ຂ້າພະເຈົ້າມັກຈະຕອບດ້ວຍ, "ກັງວົນກ່ຽວກັບຕົວເຈົ້າເອງກໍພໍແລ້ວ." ຂ້າພະເຈົ້າຈຳເປັນຕ້ອງກ້າວເຂົ້າໄປມີສ່ວນໃນທຸກໆຄັ້ງທີ່ລູກອາຍຸຫົກປີລືມກົດປຸ່ມນໍ້າຫົວສ້ວມຖ່າຍບໍ?

ແຕມີບາງຄັ້ງ, ເມື່ອການຮ້ອງຫາວ່າ "ແມ່" ໃນເຊີງແບບຮູ້ສຶກຮີບດ່ວນ-ຄືກັບເວລາທີ່ມີຄົນເອົາເຈັ້ຽຫ້ອງນໍ້າທັງມ້ວນປ່ອນລົງໃນຫົວສ້ວມ, ແລ້ວກໍຈື່ໄດ້ວ່າຕ້ອງກົດປຸ່ມນໍ້າ, ບັດນີ້ນໍ້າກໍລົ້ນຖັງໄຫຼຖ້ວມຫ້ອງໄປສູ່ຜ້າພົມທາງຍ່າງ. ບາງຄັ້ງຂ້າພະເຈົ້າກໍຈຳເປັນຕ້ອງໄດ້ກ້າວເຂົ້າໄປເພື່ອຮັກສາສິ່ງທີ່ບໍ່ດີບໍ່ໃຫ້ກາຍເປັນພັຍພິບັດ. ນັ້ນແມ່ນສ່ວນນຶ່ງຂອງການເປັນແມ່.

ນັ້ນເປັນສ່ວນນຶ່ງຂອງການເປັນຄອບຄົວ-ທີ່ເບິ່ງແຍງຫາກັນແລະກັນແລະຄວາມເຕັມໃຈທີ່ຈະກ້າວເຂົ້າມີສ່ວນ. ໃນຖານະຜູ້ທີ່ເຊື່ອ, ພວກເຮົາເປັນສ່ວນນຶ່ງຂອງຄອບຄົວຂອງພຣະຄຣິດ. ໃນຂນະທີ່ມີບາງຄັ້ງທີ່ພວກເຮົາຄວນ "ກັງວົນກ່ຽວກັບຕົວຈົ້າເອງກໍພໍແລ້ວ," ຍັງມີບາງຄັ້ງທີ່ພວກເຮົາຈຳເປັນຕ້ອງກ້າວເຂົ້າໄປຮ່ວມແລະປະຕິບັດດ້ວຍສະຕິປັນຍາເພື່ອຮັກສາສິ່ງທີ່ບໍ່ດີບໍ່ໃຫ້ກາຍເປັນພັຍພິບັດ. ຕົວຢ່າງທີ່ດີອັນນຶ່ງຂອງເຣື່ອງນັ້ນແມ່ນຜູ້ຍິງຄົນນຶ່ງຊື່ອາບີກາຍ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. 1 ຊາມູເອນ 25:14-17

14. *ແຕ່ມີຄົນໜຸ່ມຄົນນຶ່ງໄປບອກນາງອາບີກາຍເມັຽຂອງນາບານວ່າ, “ເບິ່ງແມ, ດາວິດສົ່ງຜູ້ນຳຂ່າວມາຈາກມາຈາກຖິ່ນກັນດານເພື່ອຈະຄຳນັບນາຍຂອງເຮົາ ແລະນາຍກັບເວົ້າຮ້າຍໃຫ້ກັບຄົນເຫຼົ່ານັ້ນ. 15. ແຕ່ຄົນເຫຼົ່ານັ້ນເຄີຍດີຕໍ່ເຮົາຫຼາຍ ແລະເຮົາບໍ່ຕ້ອງຖືກທຳຮ້າຍຢ່າງໃດເລີຍ ແລະບໍ່ຂາດສິ່ງໃດຕາບໃດທີ່ເຮົາໄປກັບເຂົາ ເມື່ອເຮົາຢູ່ໃນທົ່ງນາ. 16. ເຂົາເປັນເໝືອນກຳແພງຂອງເຮົາທັງກາງຄືນແລະກາງເວັນ. 17. ບັດນີ້ ຂໍທ່ານຮູ້ເຣື່ອງນີ້ແລະພິຈາຣະນາວ່າ ທ່ານຄວນຈະທຳປະການໃດ ເພາະເຂົາຄິດມຸ່ງຮ້າຍຕໍ່ນາຍຂອງເຮົາ ແລະຕໍ່ຄອບຄົວທັງສິ້ນຂອງນາຍ ນາຍນັ້ນເປັນຄົນສາມານ ໃຜຈະເວົ້ານຳກໍບໍ່ໄດ້.”*

ຫຼັງຈາກທີ່ປຶກສາຝ່າຍວິນຍານຂອງດາວິດ ຜູ້ປະກາດພຣະທັມຊາມູເອນໄດ້ຕາຍໄປ (25:1), ດາວິດແລະຄົນຂອງລາວໄດ້ຍ້າຍເຂົ້າໄປໃນຖິ່ນແຫ້ງແລ້ງກັນດານຂອງເມືອງພາຣານ, ບ່ອນທີ່ດາວິດໄດ້ຮຽນຮູ້ວ່ານາບານຕັດຂົນແກະຂອງລາວ. ການຕັດຂົນແກະເປັນງານທີ່ສລອງທີ່ເກີດຂຶ້ນສອງຄັ້ງຕໍ່ປີ, ໃນເວລາທີ່ເຈົ້າຂອງໄດ້ເຫັນຜົນຕອບແທນຂອງການລົງທຶນຂອງຕົນ. ນາບານຈະໄດ້ຮັບຜົນກຳໄລຢ່າງ

ຫຼວງຫຼາຍຈາກແກະເຫຼົ່ານັ້ນທີ່ດາວິດແລະຄົນຂອງລາວໄດ້ປົກປ້ອງ. ນາບານຜູ້ຮັ່ງມີຄົນນີ້ງມີແກະ 3,000 ໂຕ, ອາດຈະຜລິດຂົນແກະໄດ້ຫຼາຍກວ່າສາມໂຕນ. ດາວິດໄດ້ສົ່ງຄົນຂອງລາວສິບຄົນໄປທັກທາຍນາບານ, ເຕືອນລາວກ່ຽວກັບການປົກປ້ອງທີ່ຄົນຂອງເພິ່ນໄດ້ຈັດໃຫ້, ແລະຂໍຂອງປະທານໃຫ້. ແຕ່ໜ້າເສັຽດາຍ, ນາບານ "ມີຄວາມໂຫດຮ້າຍແລະຄວາມຊົ່ວຮ້າຍໃນການປະຕິບັດຂອງລາວ" (ຂໍ້ 3). ນາບານເຍາະເຍີ້ຍດາວິດແລະປະຕິເສດຄຳຮ້ອງຂໍຂອງລາວ.

ໃນທີ່ນີ້ພວກເຮົາເຫັນການປ່ຽນແປງໃນດາວິດ. ລາວປ່ອຍໃຫ້ຄວາມໃຈຮ້າຍໄດ້ຊະນະລາວ. ແທນທີ່ຈະຮ້ອງທູນຕໍ່ພຣະ ຜູ້ເປັນເຈົ້າ, ດາວິດ ໄດ້ອອກຄຳສັ່ງໃຫ້ລູກນ້ອງຂອງເພິ່ນ. "ພວກເຈົ້າທັງໝົດ, ຈົ່ງຕຽມດາບຂອງພວກທ່ານ! (ຂໍ້13). ດາວິດໄດ້ເອົາທະຫານ 400 ຄົນ (ສອງສ່ວນສາມຂອງກອງທັບທັງໝົດຂອງເພິ່ນ) ແລະອອກໄປເພື່ອການແກ້ແຄ້ນ. ຕໍ່ມາເຮົາໄດ້ຮຽນຮູ້ວ່າດາວິດຕັ້ງໃຈຈະຂ້ານາບານແລະຄົນທັງປວງໃນຄອບຄົວຂອງຊາວອິສຣາເອນເຊິ່ງເປັນຄົນທີ່ດາວິດໄດ້ຖືກເລືອກໃຫ້ເປັນຜູ້ນຳພາແລະປົກປ້ອງ. ດາວິດໄດ້ສແວງຫາການແກ້ແຄ້ນແທນທີ່ຈະໄວ້ວາງໃຈພຣະຜູ້ເປັນເຈົ້າ. ກະສັດອົງທີ່ຖືກເລືອກຂອງພຣະຜູ້ເປັນເຈົ້າໄດ້ມຸ້ງໜ້າໄປສູ່ພັຍພິບັດກ່ອນທີ່ເພິ່ນຈະຂຶ້ນບັນລັງ.

*ແມ່ນຫຍັງທີ່ກີດຂວາງເຮັດໃຫ້ເຮົາບໍ່ມີສ່ວນຮ່ວມໃນບັນຫາຂອງຄົນອື່ນ?*

ແຕ່ພຣະຜູ້ເປັນເຈົ້າຊົງກະທຳການ. ຜູ້ຮັບໃຊ້ຂອງນາບານຄົນນຶ່ງໄດ້ໄປຫານາງອາບີກາຍເມັຽຂອງນາບານ, ຫວັງວ່ານາງຈະກ້າວເຂົ້າໄປເພື່ອຍຸດພັຍພິບັດທີ່ຈະມາເຖິງ. ການກະທຳນີ້ຊີ້ບອກເຖິງຄຸນລັກສະນະຂອງອາບີກາຍທີ່ຜູ້ຮັບໃຊ້ຮູ້ວ່ານາງຈະເຂົ້າໃກ້ໄດ້. ອາບີກາຍບໍ່ໄດ້ເປັນຄົນຫຍຸ້ງກ່ຽວກັບການນິນທາ. ພວກເຮົາບໍ່ເຫັນອາບີກາຍລີ້ຢູ່ໃນມຸມຈອບຟັງການສົນທະນາຂອງນາບານ ຫຼືຂໍໃຫ້ຄົນຮັບໃຊ້ລາຍງານກັບນາງ. ຢ່າງໃດກໍຕາມ, ນາງບໍ່ໄດ້ຫຍຸ້ງຫຼາຍກັບຄວາມກັງວົນຂອງຕົນເອງທີ່ນາງບໍ່ສາມາດໃຫ້ຄົນອື່ນໄດ້. ຜູ້ຮັບໃຊ້ວາງໃຈໃຫ້ນາງເຮັດສິ່ງທີ່ຖືກຕ້ອງ. ພວກເຮົາສາມາດເຮັດຕາມຕົວຢ່າງຂອງອາບີກາຍເພື່ອເປັນຄົນທີ່ຄົນອື່ນໄວ້ວາງໃຈໃຫ້ເຮັດສິ່ງທີ່ຖືກຕ້ອງ. ພວກເຮົາສາມາດຫຼີກເວັ້ນການນິນທາ. ພວກເຮົາສາມາດເປັນຜູ້ພ້ອມຢູ່ແລ້ວ. ແລະພວກເຮົາສາມາດອະທິຖານສຳລັບການຊີ້ນຳຂອງພຣະຜູ້ເປັນເຈົ້າ.

ອາບີກາຍບໍ່ໄດ້ພະຍາຍາມຫາເຫດຜົນກັບນາບານ; ນາງຮູ້ວ່າຜົວຂອງນາງເປັນຄົນໂງ່ແລະດື້ດ້ານ (ຂໍ້ 3). ແທນທີ່ຈະໄປຫາລາວ, ນາງໄດ້ເຮັດການເຄື່ອນໄຫວຢ່າງກ້າຫານເພື່ອໄປຫາດາວິດໂດຍກົງ (ຂໍ້ 19). ເຮົາຕ້ອງໃຊ້ຄວາມເຂົ້າໃຈແລະຟັງການຊີ້ນຳຂອງພຣະວິນຍານບໍຣິສຸດໃນເວລາຕັດສິນໃຈຈະແຊກແຊງແນວໃດ.

## 2. <u>1 ຊາມູເອນ 25:23-28</u>

23. *ເມື່ອນາງອາບີກາຍເຫັນດາວິດ ນາງກໍຟ້າວລົງຈາກຫຼັງລໍ ກົ້ມໜ້າລົງຕໍ່ໜ້າດາວິດ ແລະຂາບລົງດິນ.* 24. *ນາງຂາບລົງທີ່ຕີນຂອງດາວິດກ່າວວ່າ, "ເຈົ້ານາຍຂອງຂ້ານ້ອຍ ຄວາມຜິດນັ້ນຢູ່ທີ່ຂ້ານ້ອຍແຕ່ຜູ້ດຽວ ຂໍໃຫ້ຜູ້ຮັບໃຊ້ຍິງຂອງທ່ານໄດ້ເວົ້າໃຫ້ທ່ານຟັງ.* 25. *ຂໍເຈົ້ານາຍຂອງຂ້ານ້ອຍຢ່າໄດ້ເອົາຄວາມກັບນາບານ ຊາຍສາມຫາວຄົນນີ້ເລີຍ ຄືນາບານ ເພາະເຂົາເປັນຢ່າງທີ່ຊື່ຂອງເຂົາບອກ ນາບານເປັນຊື່ຂອງເຂົາ ແລະຄວາມໂງ່ຈ້າກໍຢູ່ກັບເຂົາ ແຕ່ຂ້ານ້ອຍຜູ້ຮັບໃຊ້ຍິງຂອງທ່ານ ບໍ່ໄດ້ເຫັນພວກຄົນໜຸ່ມຂອງເຈົ້ານາຍຊຶ່ງທ່ານໄດ້ໃຊ້ໄປນັ້ນ.* 26. *ເຫດສະນັ້ນ ເຈົ້ານາຍຂອງຂ້ານ້ອຍ ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ສັນໃດ ແລະທ່ານມີຊີວິດຢູ່ສັນໃດ ດ້ວຍວ່າພຣະຜູ້ເປັນເຈົ້າຊົງກະທຳໃຫ້ທ່ານຣະງັບເສັຽໄປຈາກຄວາມຜິດທີ່ທຳໃຫ້ໂລຫິດຕົກ ແລະຈາກການແກ້ແຄ້ນດ້ວຍມືຂອງທ່ານເອງ ເພາະສະນັ້ນຂໍໃຫ້ສັດຕຣູຂອງທ່ານ ແລະບັນດາຜູ້ທີ່ທຳຮ້າຍຕໍ່ເຈົ້ານາຍຂອງຂ້ານ້ອຍຈົ່ງເປັນຢ່າງລານາບານ.* 27. *ສິ່ງເຫຼົ່ານີ້ຊຶ່ງຜູ້ຮັບໃຊ້ຍິງຂອງທ່ານໄດ້ນຳມາໃຫ້ເຈົ້ານາຍຂອງຂ້ານ້ອຍ ຂໍມອບໃຫ້ແກ່ບັນດາຄົນໜຸ່ມ ຊຶ່ງຕິດຕາມເຈົ້ານາຍຂອງຂ້ານ້ອຍ.* 28. *ໄດ້ໂຜດອະພັຍຄວາມຜິດຂອງຜູ້ຮັບໃຊ້ຍິງຂອງທ່ານເຖີດ ເພາະພຣະຜູ້ເປັນເຈົ້າຄົງຊົງກະທຳໃຫ້ເຈົ້ານາຍຂອງຂ້ານ້ອຍເປັນເຊື້ອສາຍທີ່ໝັ້ນຄົງ ດ້ວຍວ່າເຈົ້ານາຍຂອງຂ້ານ້ອຍທຳສົງຄາມຢູ່ຝ່າຍພຣະຜູ້ເປັນເຈົ້າ ຕາບໃດທີ່ທ່ານມີຊີວິດຢູ່ຈະຫາຄວາມຊົ່ວທີ່ຕົວທ່ານບໍ່ໄດ້ເລີຍ.*

ເມື່ອອາບີກາຍໄດ້ຍິນລາຍງານຂອງຜູ້ຮັບໃຊ້, ນາງຈຶ່ງໄດ້ໄປເຮັດວຽກທີ່ອາຫານເປັນຂອງຂວັນໃຫ້ດາວິດ (ຂໍ້18-19). ແລ້ວນາງກໍຂີ່ລໍອອກໄປພົບລາວ. ການກະທຳຂອງອາບີກາຍແມ່ນກ້າຫານແລະເດັດດ່ຽວ. ແມ່ຍິງທີ່ແຕ່ງງານຢູ່ໃນສມັຍບູຮານແຖບຕາເວັນອອກກາງຕາມປົກກະຕິຈະບໍ່ກະທຳລັບຫລັງຜົວຂອງນາງເພື່ອໄປພົບກັບສັດຕູຂອງລາວ. ຢ່າງໃດກໍຕາມ, ອາບີກາຍ ສລາດປະເມີນສະຖານະການແລະປະຕິບັດ. ກ່ອນທີ່ເຮົາຈະສຶກສາຄຳເວົ້າຂອງອາບີກາຍ, ຂໍໃຫ້ພິຈາລະນາລັກສະນະນິສັຍແລະການກະທຳຂອງລາວໃຫ້ດີຂຶ້ນ.

- **ອາບີກາຍເປັນຄົນມີປັນຍາຫຼືຄົນສລາດ.** ນີ້ຄືວິທີທີ່ເຮົາຖືກແນະນຳໃຫ້ຮູ້ຈັກລາວໃນຂໍ້ທີ 3. ເຮົາຍັງເຫັນວ່ານາງເປັນຄົນຖ່ອມຕົວ, ມີຄວາມສຸຂຸມ, ມີໃຈກວ້າງຂວາງ, ມີຄວາມປອງດອງ, ມີຄວາມເຊື່ອຖື, ແລະຕັດສິນໃຈ. ອາບີກາຍເປັນແມ່ຍິງທີ່ມີສະຕິປັນຍາ.
- **ອາບີກາຍສະແດງຄວາມຖ່ອມແລະຄວາມເຄົາລົບ.** ນາງໄດ້ສົ່ງຂອງຂວັນ. ນາງໄດ້ຂີ່ລໍ, ຊຶ່ງເປັນສັດທີ່ຖ່ອມຕົວໝາຍເຖິງຄວາມສງົບ. ນາງໄດ້ກົ້ມຂາບລົງດ້ວຍຄວາມຖ່ອມຕົວ ແລະໄດ້ຄຸເຂົ່າລົງທີ່ຕີນຂອງດາວິດ.
- **ອາບີກາຍໄດ້ໄປລົມກັບດາວິດ.** ການສົ່ງຂໍ້ຄວາມຈະເປັນທາງເລືອກທີ່ງ່າຍກວ່າ ແລະປອດພັຍກວ່າ, ແຕ່ອາບີກາຍ ຮັບຮູ້ຜົນກະທົບຂອງການສື່ສານແບບເຫັນໜ້າຕໍ່ໜ້າ.

ໃນຄຳປາໄສທີ່ຍາວທີ່ສຸດຂອງຜູ້ຍິງຄົນນຶ່ງທີ່ບັນທຶກໄວ້ໃນພຣະຄັມພີເດີມ, ອາບີກາຍໄດ້ເວົ້າຄວາມຈິງ. ນາງໄດ້ອ້ອນວອນໃຫ້ດາວິດຟັງເມື່ອນາງໄດ້ຫັນຈຸດສຸມຂອງດາວິດກັບຄືນມາຫາພຣະເຈົ້າ. ອາບີກາຍເວົ້າຄວາມຈິງຂອງພຣະເຈົ້າ. ເຮົາບໍ່ຮູ້ວ່າອາບີກາຍຮູ້ຄຳສັນຍາຂອງພຣະເຈົ້າຕໍ່ດາວິດໄດ້ແນວໃດ ແຕ່ຖ້ອຍຄຳຂອງນາງສະແດງໃຫ້ເຫັນວ່າລາວໄດ້ເອົາຈຸດສຸມໃສ່ທີ່ພຣະເຈົ້າ. ໃນຖານະເປັນຄຣິສະຕຽນ, ພວກເຮົາບໍ່ຈຳເປັນຕ້ອງລໍຖ້າການເປີດເຜີຍສະເພາະກ່ຽວກັບຄົນອື່ນກ່ອນທີ່ພວກເຮົາຈະເວົ້າຄວາມຈິງກັບເຂົາເຈົ້າໃນຄວາມຮັກ.

*ແມ່ນຫຍັງທີ່ທ່ານຊົມເຊີຍກ່ຽວກັບວິທີທີ່ອາບີກາຍໄດ້ແຊກແຊງ?*

## 3. <u>1 ຊາມູເອນ 25:32-35</u>

32. *ດາວິດຈຶ່ງກ່າວແກ່ອາບີກາຍວ່າ, "ສັນລະເສີນພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນຜູ້ຊຶ່ງໃຊ້ເຈົ້າໃຫ້ມາພົບເຮົາໃນວັນນີ້. 33. ຂໍໃຫ້ຄວາມສຸຂຸມຂອງເຈົ້າເປັນພຣະພອນ ແລະຂໍໃຫ້ຕົວເຈົ້າໄດ້ຮັບພຣະພອນ ເພາະເຈົ້າໄດ້ປ້ອງກັນເຮົາໃນວັນນີ້ໃຫ້ພົ້ນຈາກຄວາມຜິດທີ່ທຳໃຫ້ຄົນເລືອດຕົກ ແລະຈາກການແກ້ແຄ້ນດ້ວຍມືຂອງເຮົາເອງ. 34. ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນຜູ້ຊົງຣະງັບເຮົາເສັຽຈາກການກະທຳຮ້າຍຕໍ່ພວກເຈົ້ານັ້ນ ຊົງພຣະຊົນຢູ່ສັນໃດ ຖ້າເຈົ້າບໍ່ໄດ້ຟ້າວມາພົບເຮົາເສັຽ ເຖິງຕົວເຈົ້າມື້ອື່ນເຊົ້າຄົງບໍ່ມີເຫຼືອຈັກຄົນນຶ່ງເປັນແນ່." 35. ແລ້ວດາວິດກໍຮັບບັນດາສິ່ງທີ່ນາງນຳມາຈາກມືຂອງນາງ ແລະດາວິດກ່າວແກ່ນາງວ່າ, "ຈົ່ງກັບຄືນໄປຍັງບ້ານເຮືອນຂອງເຈົ້າດ້ວຍສັນຕິສຸກເຖີດ ເຮົາໄດ້ຟັງສຽງຂອງເຈົ້າແລ້ວ ແລະເຮົາກໍໄດ້ອະນຸໂລມຕາມຄຳຂໍຮ້ອງຂອງເຈົ້າ."*

ດາວິດໄດ້ຟັງແລະເຮັດຕາມຄຳແນະນຳຂອງອາບີກາຍ. ດາວິດໄດ້ປະກາດພອນໃນຂໍ້ທີ 32-33 ປະກອບດ້ວຍສາມພາກສ່ວນ.

- ເປັນພຣະພອນຂອງພຣະເຈົ້າທີ່ໄດ້ສົ່ງອາບີກາຍ.
- ເປັນພຣະພອນແກ່ຄວາມພິຈາລະນາຂອງອາບີກາຍ.
- ເປັນພຣະພອນແກ່ອາບີກາຍຜູ້ທີ່ຮັກສາດາວິດໄວ້ຈາກການແກ້ແຄ້ນໃນມືຂອງຕົນ.

ເນື່ອງຈາກການແຊກແຊງຂອງອາບີກາຍ ດາວິດຈຶ່ງຫຼີກລ້ຽງບາບ. ດາວິດໄດ້ຮັບຮູ້ບົດບາດຂອງອາບີກາຍໃນເຣື່ອງນີ້-"ເຈົ້າໄດ້ຮັກສາຂ້ອຍໄວ້ບໍ່ໃຫ້ມີສ່ວນຮ່ວມໃນການນອງເລືອດ"-ແຕ່ລາວຍັງໄດ້ຮັບຮູ້ບົດບາດຂອງພຣະເຈົ້າຄືຜູ້ທີ່ "ຫ້າມຂ້ອຍບໍ່ໃຫ້ທຳຮ້າຍເຈົ້າ." ໃນທີ່ນີ້ພວກເຮົາເຫັນສິ່ງທີ່ໜ້າຫວາດສຽວທີ່ບໍ່ທຳມະດາຂອງພຣະປະສົງຂອງພຣະເຈົ້າທີ່ເຮັດວຽກຮ່ວມກັບຄວາມຕັ້ງໃຈຂອງມະນຸດ. <u>ພຣະເຈົ້າບໍ່ຕ້ອງການຄວາມຊ່ອຍເຫລືອຂອງເຮົາ, ແຕ່ພຣະເຈົ້າອົງຊົງຣິດອຳນາດ ພຣະອົງຊົງເຊື້ອເຊີນເຮົາໃຫ້ເຂົ້າຮ່ວມພຣະອົງໃນວຽກງານທີ່ດີທີ່ພຣະອົງກຳລັງເຮັດຢູ່ໃນໂລກນີ້.</u>

*ຄຳເວົ້າແລະການກະທຳຂອງເຮົາໃນຄວາມຂັດແຍ່ງຊ່ວຍຜູ້ຄົນໃຫ້ເຂົ້າໃຈຈຸດປະສົງຂອງພຣະເຈົ້າໄດ້ແນວໃດ?*

ດາວິດຮັບຮູ້ວ່າພຣະເຈົ້າເຮັດວຽກໂດຍຜ່ານນາງອາບີກາຍ, ເຊັ່ນດຽວກັນກັບທີ່ພຣະເຈົ້າໄດ້ເຮັດວຽກຜ່ານດາວິດໃນການຂ້າໂກລີອາດ. ພຣະເຈົ້າຕ້ອງການທີ່ຈະເຮັດວຽກໂດຍຜ່ານພວກເຮົາ, ເຊັ່ນດຽວກັນ, ເພື່ອຊ່ວຍເຫຼືອເຊິ່ງກັນແລະກັນໃຫ້ຄືນດີ, ຊຸກຍູ້ເຊິ່ງກັນແລະກັນ, ແລະອ້ອນວອນເພື່ອຊຶ່ງກັນແລະກັນ.

ໃນຕອນທ້າຍຂອງ 1 ຊາມູເອນ ບົດທີ 25, ພວກເຮົາໄດ້ອ່ານການເສັຽຊີວິດຂອງນາບານ. ອາບີກາຍໄດ້ກັບເມືອເຮືອນຫານາບານຊຶ່ງມີການກິນລ້ຽງແລະເມົາເຫຼົ້າຢູ່. ນາງໄດ້ລໍຖ້າຈົນເຖິງຕອນເຊົ້າ, ໃນເວລາທີ່ລາວໄດ້ສ່ວງຈາກເມົາ, ເພື່ອບອກລາວກ່ຽວກັບການພົບຂອງນາງກັບດາວິດ. ເມື່ອນາບານໄດ້ຍິນຄຳເວົ້າຂອງນາງ, "ຫົວໃຈຂອງລາວກໍຕາຍແລະກາຍເປັນເໝືອນກ້ອນຫີນ. ປະມານສິບມື້ຕໍ່ມາ, ພຣະຜູ້ເປັນເຈົ້າກໍໄດ້ປະຫານຊີວິດຂອງນາບານ" (1 ຊາມູເອນ 25:37-38). ອີກເທື່ອນຶ່ງ ພວກເຮົາເຫັນພຣະເຈົ້າເຮັດວຽກກັບອາບີກາຍເພື່ອນຳກ່ຽວກັບແຜນການຂອງພຣະອົງ. ຄືກັບອາບີກາຍ, ເຮົາສາມາດກ້າວເຂົ້າໄປດ້ວຍສະຕິປັນຍາເມື່ອເຮົາເຫັນເພື່ອນຮ່ວມຄວາມເຊື່ອທີ່ມຸ້ງໜ້າໄປສູ່ເສັ້ນທາງອັນຕະລາຍ.

*ຢູ່ໃສໃນວັທນະທຳຂອງພວກເຮົາທີ່ທ່ານເຫັນໂອກາດສຳລັບຊາວຄຣິສະຕຽນເພື່ອຊ່ວຍແກ້ໄຂຂໍ້ຂັດແຍ້ງ?*

## ນຳໃຊ້ໃນຊີວິດ

ພວກເຮົາຄວນກ້າວເຂົ້າໄປເພື່ອຮັກສາສະຖານະການທີ່ບໍ່ດີບໍ່ໃຫ້ຮ້າຍແຮງຂຶ້ນ. ເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ອະທິຖານ.** ຖ້າທ່ານຮູ້ວ່າຄົນອື່ນທີ່ຄືດາວິດກຳລັງມຸ້ງໜ້າໄປສູ່ທາງທີ່ບໍ່ດີ, ຈົ່ງອະທິຖານ. ເຂົ້າແຊກແຊງສຳລັບຄົນນັ້ນ. ໃຊ້ພຣະຄຳຟີລິບປອຍ 1:9-11 ເປັນສ່ວນນຶ່ງຂອງຄຳອະທິຖານຂອງທ່ານ.
- **ສັນລະເສີນ.** ເລີ່ມລາຍການວິທີທີ່ທ່ານສາມາດອະທິຖານເພື່ອຄົນອື່ນ. ໃນຕອນທ້າຍຂອງແຕ່ລະອາທິດ, ເບິ່ງຄືນໃນບັນຊີລາຍຊື່. ຕິດຕາມຫາຜູ້ທີ່ທ່ານໄດ້ອະທິຖານ ເພື່ອເຂົ້າໄປເບິ່ງວ່າພຣະເຈົ້າໄດ້ຕອບຄຳອະທິຖານເຫຼົ່ານີ້ແນວໃດ. ສັນລະເສີນພຣະເຈົ້າສຳລັບຄວາມສັດຊື່ຂອງພຣະອົງໃນຊີວິດຂອງປະຊາຊົນຂອງພຣະອົງ.
- ***ກ້າວເຂົ້າໄປ.*** ຍ້ອນວ່າພຣະເຈົ້າໃຫ້ໂອກາດແກ່ທ່ານ, ຈົ່ງກ້າວເຂົ້າໄປໃນຊີວິດຂອງຄົນອື່ນທີ່ຕ້ອງການ "ການແກ້ໄຂໃຫ້ຖືກຕ້ອງ." ໃຫ້ແນ່ໃຈວ່າທຸກຄຳທີ່ທ່ານສເນີນັ້ນມີຫຼັກຖານຢູ່ໃນພຣະຄຳຂອງພຣະເຈົ້າ ແລະເວົ້າດ້ວຍຄວາມຮັກແລະພຣະຄຸນ.

ໂດຍຜ່ານພຣະຄຣິດ, ພວກເຮົາໄດ້ຮັບການຄືນດີກັບພຣະເຈົ້າ. ໃຫ້ພວກເຮົາເຮັດວຽກເພື່ອຄວາມສາມັກຄີ ແລະປອງດອງກັນໃນຊຸມຊົນຂອງພວກເຮົາໂດຍການເຕັມໃຈທີ່ຈະກ້າວເຂົ້າໄປ ແລະເວົ້າຄວາມຈິງໃນຄວາມຮັກ.

**ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**